City of Seattle

# ແຈ້ງການການບໍ່ເລືອກປະຕິບັດ

ເມືອງຊີແອດເທິລ ຂໍຮັບປະກັນວ່າຈະບໍ່ມີໃຜຖືກເລືອກປະຕິບັດກັບໂປຼແກຼມຂອງເມືອງ ແລະ ກິດຈະການຕ່າງໆທີ່ອີງຕາມເຊື້ອຊາດ, ສີຜິວ, ຕົ້ນກຳເນີດຂອງຊາດ, ສາສະໜາ, ເພດ, ອາຍຸ, ຫຼື ຄົນພິການທີ່ໄດ້ສະໜອງໄວ້ໃນ ຫົວຂໍ້ VI ຂອງ Civil Rights Act of 1964 (ກົດໝາຍວ່າດ້ວຍສິດທິຂອງພົນລະເຮືອນ ປີ 1964), Civil Rights Restoration Act of 1987 (ກົດໝາຍວ່າດ້ວຍການຟື້ນຟູສິດທິພົນລະເຮືອນ ປີ 1987) (P.L. 100.259), Age Discrimination Act of 1975 (ກົດໝາຍວ່າດ້ວຍການການຈຳແນກອາຍຸ ປີ 1975), ທີ່ໄດ້ປັບປຸງແລ້ວ, ແລະ ຫົວຂໍ້ II ຂອງ American with Disabilities Act. (ກົດໝາຍວ່າດ້ວຍຄົນພິການອາເມລິກາ). ທາງເມືອງຈະປະຕິບັດຕາມໃນຕໍ່ໜ້າກັບກົດໝາຍເພີ່ມເຕີມວ່າດ້ວຍສິດທິຂອງພົນລະເຮືອນຂອງລັດ ແລະ ເມືອງ ແລະ ຮັບປະກັນວ່າຈະບໍ່ມີໃຜຖືກເລືອກປະຕິບັດກັບໂປຼແກຼມຂອງຕົນ ແລະ ກິດຈະການຕ່າງໆທີ່ອີງຕາມທັດສະນະທາງເພດ, ລັກສະນະທາງເພດ, ສະຖານະພາບການແຕ່ງງານ, ສະຖານະພາບຂອງພໍ່ແມ່, ແນວຄິດທາງການເມືອງ, ຄວາມເຊື່ອ, ບັນພະບຸລຸດ, ທີ່ເຂົ້າຮ່ວມໃນ Section 8 (ຂໍ້ 8) ໂປຼແກຼມທີ່ຢູ່ອາໄສ, ສະຖານະພາບການເປັນທະຫານ ຫຼື ທະຫານຜ່ານເສິກ, ຫຼື ເນື່ອງຈາກລ້ຽງລູກດ້ວຍນົມໃນສະຖານທີ່ສາທາລະນະ, ທີ່ໄດ້ສະໜອງໂດຍ Seattle Municipal Code (ກົດລະບຽບເມືອງຊີແອດເທິລ) 14.04, 14.06 ແລະ 14.10.

ບຸກຄົນໃດໜຶ່ງທີ່ຮູ້ສຶກວ່າເຂົາເຈົ້າໄດ້ຖືກເລືອກປະຕິບັດຊຶ່ງໄດ້ຖືກປົກປ້ອງພາຍໃຕ້ ຫົວຂໍ້ VI ຫຼື ກົດໝາຍອື່ນໆທີ່ອາດຍື່ນຄຳຮ້ອງທຸກກັບ Seattle Office for Civil Rights (ຫ້ອງການເມືອງຊີແອດເທິລສຳລັບສິດທິຂອງພົນລະເຮືອນ).

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ City of Seattle Title VI program (ໂປຼແກຼມເມືອງຊີແອດເທິລ) ຫົວຂໍ້ VI, ຫຼື ສຳລັບຂໍ້ມູນກ່ຽວກັບວິທີການຍື່ນຄຳຮ້ອງທຸກ, ໂທຫາ Seattle Office for Civil Rights (ຫ້ອງການເມືອງຊີແອດເທິລສຳລັບສິດທິຂອງພົນລະເຮືອນ) ໄດ້ທີ່ (206) 684-4500, ອີເມວລ໌ ocr_intake@seattle.gov, ຍ້ຽມຢາມທີ່ www.seattle.gov/civilrights ຫຼື ຍ້ຽມຢາມດ້ວຍຕົນເອງທີ່ 810, Third Avenue, Suite 750, Seattle, WA 98104. Seattle Office for Civil Rights (ຫ້ອງການເມືອງຊີແອດເທິລສຳລັບສິດທິຂອງພົນລະເຮືອນ) ແມ່ນເປີດ ວັນຈັນ ຫາ ວັນສຸກ, ເວລາ 8 ໂມງເຊົ້າ ຫາ 5 ໂມງແລງ.